ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 1457/ສທ

ນະຄອນຫຼວງວຽງຈັນ, ວັນທີ 07 DEC 2020

# ຄຳສັ່ງ

## ກ່ຽວກັບວຽກງານ ການຈັດຊື້, ສະໜອງ ແລະ ການຊຳລະໜີ້ສິນ ຄ່າຢາ, ເຄມີ ແລະ ອຸປະກອນການແພດ

- ອີງຕາມ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ (ສະບັບປັບປຸງ) ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ຄຳສັ່ງແນະນຳຂອງລັດຖະມົນຕີກ່ຽວກັບກົນໄກການເກັບເງິນສົມທົບ, ການຈ່າຍ ແລະ ການ ຄິດໄລ່ອັດຕາຄ່າບໍລິການສຳລັບກອງທຶນປະກັນສຸຂະພາບແຫ່ງຊາດ ສະບັບເລກທີ 0476/ສທ, ລົງວັນ ທີ 16 ພຶດສະພາ 2018;
- ອີງຕາມກອງປະຊຸມປະຊຸມຄັ້ງວັນທີ 6 ພະຈິກ 2020 ເພື່ອປຶກສາຫາລືກ່ຽວກັບບັນຫາໜີ້ສິນ ຂອງໂຮງ ໝໍໃນຂອບເຂດທົ່ວປະເທດ ທີ່ຄ້າງຊຳລະຄ່າຢາ-ຜະລິດຕະພັນການແພດ ໃຫ້ແກ່ຜູ້ສະໜອງ;
- ອີງຕາມ ການຄົ້ນຄ້ວາ ແລະ ເຫັນດີ ຂອງຫ້ອງການກະຊວງສາທາລະນະສຸກ.

ໃນໄລຍະຜ່ານມາ ກະຊວງສາທາລະນະສຸກ ໄດ້ປັບປຸງລະບົບການຈັດຊື້, ສະໜອງຢາ, ເຄມີ ແລະ ຜະ ລິດຕະພັນການແພດ ໃຫ້ແກ່ໂຮງໝໍຂັ້ນຕ່າງໆ ຂອບເຂດທົ່ວປະເທດ ເພື່ອຮັບປະກັນໃຫ້ມີຢາຈຳເປັນພື້ນຖານ ພຽງພໍ ພ້ອມທັງຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ ສາມາດນຳໃຊ້ເຂົ້າໃນການກັນພະ ຍາດ ແລະ ປິ່ນປົວສຸຂະພາບຂອງປະຊາຊົນບັນດາເຜົ່າຕາມນະໂຍບາຍ 05 ດີ 01 ພໍໃຈ, ເຮັດໃຫ້ການປົກຄຸມ ສຸຂະພາບທົ່ວປວງຊົນ ບັນລຸຕາມຄາດໝາຍ. ແຕ່ສະພາບປະຈຸບັນ, ການຈັດຕັ້ງປະຕິບັດຂອງພາກສ່ວນກ່ຽວ ຂ້ອງ ຍັງພົບຂໍ້ຫຍຸ້ງຍາກ ບາງດ້ານ ເຊັ່ນວ່າ: ຂະບວນການຈັດຊື້ໃຊ້ເວລາດົນ, ການສະໜອງ, ການຊຳລະຄ່າ ຢາ, ເຄມີ ແລະ ຜະລິດຕະພັນການແພດ ບໍ່ໄດ້ຕາມແຜນ, ປະຕິບັດສັນຍາບໍ່ໄດ້ດີເທົ່າທີ່ຄວນ ແລະ ການທົດ ແທນຄືນ ຄ່າບໍລິການປິ່ນປົວໃຫ້ສະຖານທີ່ບໍລິການປິ່ນປົວ ຊັກຊ້າ. ສະນັ້ນ, ເພື່ອເຮັດໃຫ້ວຽກງານການຈັດຊື້, ການສະໜອງຢາ ແລະ ການຊຳລະຄ່າຢາ, ເຄມີ ແລະ ຜະລິດຕະພັນການແພດ, ການລາຍງານ ແລະ ແລກ ປ່ຽນຂໍ້ມູນຮ່ວມກັນ ໃຫ້ມີຄວາມວ່ອງໄວຄ່ອງຕົວ ແລະ ທັນກັບສະພາບການ.

### ລັດຖະມົນຕີ ອອກຄຳສັ່ງ ດັ່ງນີ້:

**I. ບັນດາ ກົມ, ກອງ ແລະ ຄະນະກຳມະການ ທີ່ຂຶ້ນກັບກະຊວງສາທາລະນະສຸກ ປະກອບມີ ຫ້ອງການ ກະຊວງສາທາລະນະສຸກ, ກົມການເງິນ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ, ຫ້ອງການ ປະກັນສຸຂະພາບແຫ່ງຊາດ, ສູນສະໜອງຢາ ແລະ ອຸປະກອນການແພດ, ໂຮງ ໝໍ ແລະ ຄະນະ ກຳມະການ ປະມູນຈັດຊື້-ຈັດຈ້າງ ຂັ້ນກະຊວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຄື:**

1) ສູນສະໜອງຢາ ແລະ ອຸປະກອນການແພດ ມີໜ້າທີ່ສະໜອງບັນຊີ ແລະ ຂໍ້ມູນທີ່ກ່ຽວຂ້ອງ ຂອງ ລາຍ ການສິນຄ້າ ພ້ອມມູນຄ່າ ຂອງ ຜູ້ຊະນະການປະມູນ ແລະ ສັນຍາ ທີ່ມີຜົນສັກສິດໃນການຈັດຕັ້ງ ປະຕິບັດໄດ້ ແລ້ວໃນຂອບເຂດທົ່ວປະເທດ (ເປັນຟາຍ Excel ສົ່ງທາງກຸ່ມ)ໃຫ້ກົມອາຫານ ແລະ ຢາ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມການເງິນ ແລະ ຫ້ອງການປະກັນສຸຂະພາບແຫ່ງຊາດ ເພື່ອຕິດຕາມ , ກຳໄດ້ສະພາບການ ສະໜອງ ແລະ ການຊຳລະຄ່າຢາ, ເຄມີ , ອຸປະກອນການແພດ ແລະ ອິກຊີ ຢ່າງເປັນລະບົບ ໃນແຕ່ລະໄລຍະ;

2) ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ ແລະ ຄະນະກຳມະການປະມູນຈັດຊື້-ຈັດ ຈ້າງຂັ້ນກະຊວງ ມີໜ້າທີ່ສັງລວມ ແລະ ຊີ້ນຳໂຮງໝໍສູນກາງ ແລະ ສູນປິ່ນປົວ, ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ໃຫ້ສະຫຼຸບສັງລວມ ແລະ ລາຍງານການຮັບຢາ, ເຄມີ, ອຸປະກອນການແພດ ແລະ ອົກຊີ ຈາກຜູ້ສະໜອງຕາມສັນຍາ ແຕ່ລະເດືອນ, ການຊຳລະຄ່າຢາ, ເຄມີ, ອຸປະກອນການແພດ ແລະ ອົກຊີ ໃນ ທຸກໆເດືອນ ສົ່ງໃຫ້ບັນດາກົມກອງ ທີ່ກ່ຽວຂ້ອງທີ່ກ່າວມາຂ້າງເທິງ (ຂໍ້ I) ແລະ  ຄະນະກຳມະການປະມູນ ຈັດ ຊື້-ຈັດຈ້າງ ຂັ້ນກະຊວງ ເພື່ອປະເມີນ ວິເຄາະ ບັນຫາ ແລະ ສາເຫດ ການບໍ່ປະຕິບັດຕາມສັນຍາ, ຄວາມຊັກ ຊ້າ ໃນ ການສະໜອງ ແລະ ການຊຳລະ ເພື່ອມີວິທີແກ້ໄຂ ຢ່າງແທດເຖິງ ແລະ ທັນສະພາບການ;

3) ກົມການເງິນ ມີໜ້າທີ່ສະຫຼຸບສັງລວມ ແລະ ລາຍງານຂໍ້ມູນສະຫຼຸບລາຍຮັບ-ລາຍຈ່າຍ ປະຈຳໄຕມາດ ຂອງ ໂຮງໝໍສູນກາງ ແລະ ທ້ອງຖິ່ນຕາມສາລະບານລາຍຈ່າຍງົບປະມານ ສົ່ງໃຫ້ ການນຳກະຊວງ ແລະ ບັນ ດາກົມກອງ ທີ່ກ່ຽວຂ້ອງທີ່ກ່າວມາຂ້າງເທິງ (ຂໍ້ I). ພ້ອມດຽວກັນ ກໍມີໜ້າທີ່ ເພື່ອແນະນຳ ໃຫ້ໂຮງໝໍ ຂັ້ນຕ່າງໆ ແລະ ພະແນກສາທາລະນະສຸກແຂວງ ຊຳລະຄ່າ ຢາ, ເຄມີ, ອຸປະກອນການແພດ ແລະ ອົກຊີ ໃຫ້ແກ່ບໍລິສັດ ການຢາ ແລະ ໂຮງງານຜະລິດຢາ ໃນແຕ່ລະງວດ ຫລື ເດືອນ ໃຫ້ທັນການ ຕາມມູນຄ່າສິນຄ້າ ທີ່ໂຮງໝໍໄດ້ຮັບ ຫລື ຕາມລາຍຮັບທີ່ມີຕົວຈິງ ຂອງໂຮງໝໍ, ມູນຄ່າໜີ້ສິນທີ່ຍັງຄ້າງຊຳລະໃຫ້ແກ່ຜູ້ປະກອບການ ການຢາ, ມີ ໜ້າ ທີ່ປະສານສົມທົບໂດຍກົງ ກັບ ພະແນກສາທາລະນະສຸກແຂວງ, ໂຮງໝໍແຕ່ລະຂັ້ນ ແລະ  ຜູ້ປະກອບການ ການ ຢາ ກ່ຽວກັບໜີ້ສິນທີ່ຍັງຄ້າງຊຳລະ ເພື່ອຊອກວິທີແກ້ໄຂ ຢ່າງມີປະສິດທິພາບ;

4) ຫ້ອງການປະກັນສຸຂະພາບແຫ່ງຊາດ ມີໜ້າທີ່ສະຫຼຸບລາຍງານ ການຈ່າຍເງິນທົດແທນຄືນ ໃຫ້ສະຖານ ທີ່ບໍລິການປິ່ນປົວ (ໂຮງໝໍ) ແລະ ຈຳນວນທີ່ຍັງຄ້າງຈ່າຍຢູ່ຄັງເງິນແຫ່ງຊາດແຕ່ລະຂັ້ນ ປະຈຳເດືອນ ສົ່ງໃຫ້ ບັນ ດາກົມກອງທີ່ກ່ຽວຂ້ອງ ທີ່ກ່າວມາຂ້າງເທິງ (ຂໍ້ I), ພະແນກສາທາລະນະສຸກແຂວງ,ໂຮງໝໍແຕ່ລະຂັ້ນ ແລະ ຜູ້ ປະກອບການ ການຢາ ເພື່ອໃຫ້ພາກສ່ວນທີ່ກ່ຽວ ຫຼື ຄູ່ສັນຍາ ປະສານງານກັນໂດຍກົງ ກ່ຽວກັບຄວາມສາມາດ ສະໜອງ ແລະ ການຊຳລະ ຄ່າຢາ, ອຸປະກອນການແພດ, ເຄມີ ແລະ ອົກຊີແຕ່ລະໄຕມາດ (ແຕ່ລະງວດ) ໄດ້ ທັນການ;

5) ຄະນະກຳມະການຈັດຊື້-ຈັດຈ້າງ ດ້ວຍທຶນ ຂອງລັດ, ຊ່ວຍເຫຼືອລ້າ, ກູ້ຢືມ ແລະ ງົບປະມານ ຂອງໂຄງ ການ ຂັ້ນກະຊວງ ແລະ ອະນຸກຳມະການກ່ຽວຂ້ອງ ເອົາໃຈໃສ່ປັບປຸງ ລະບຽບການ ຈັດຊື້-ຈັດຈ້າງ, ການສະ   ໜອງ ແລະ ການຊຳລະສະສາງ ໃຫ້ສອດຄ່ອງ, ທັນເວລາ ແລະ ຮັບປະກັນໃນການປະຕິບັດສັນຍາ ຢ່າງເຂັ້ມ ງວດ.

**II. ພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຄື:**

ພະແນກສາທາລະນາສຸກແຂວງ ແລະ ນະຄອນຫລວງ ຊີ້ນຳໃຫ້ຂະແໜງອາຫານ ແລະ ຢາ, ໂຮງໝໍ ແຕ່ລະ ຂັ້ນ ທີ່ຂຶ້ນກັບ ສະຫຼຸບສັງລວມ ແລະ ລາຍງານລາຍຮັບ-ລາຍຈ່າຍ ຂອງໂຮງໝໍແຂວງ, ໂຮງໝໍຊຸມຊົນ ແລະ ໂຮງ ໝໍນ້ອຍ, ການຈັດຊື້, ການຊຳລະຄ່າຢາ, ເຄມີ, ອຸປະກອນການແພດ ແລະ ອົກຊີ  ສົ່ງໃຫ້ກົມການເງິນ, ກົມປິ່ນ ປົວ ແລະ ຟື້ນຟູໜ້າທີ່ການ, ກົມ

ອາຫານ ແລະ ຢາ ແລະ ຄະນະກຳມະການຈັດຊື້-ຈັດຈ້າງ ຂັ້ນກະຊວງ ຊຶ່ງການ ສະຫຼຸບຂອງເດືອນແມ່ນກຳນົດເອົາແຕ່ວັນທີ 1 ຫາ ວັນທີ 30 ຂອງທຸກເດືອນ.

**III. ໂຮງໝໍສູນກາງ ແລະ ທ້ອງຖິ່ນ ມີໜ້າທີ່ ແລະ ຄວາມຮັບຜິດຊອບຄື:**

1) ໂຮງໝໍສູນກາງ ແລະ ສູນ ບໍລິການກວດ-ປິ່ນປົວພະຍາດສະເພາະທາງ, ໂຮງໝໍແຂວງ 17 ແຂວງ ແລະ ນະຄອນຫຼວງ ມີໜ້າທີ່ສະຫຼຸບລາຍງານລາຍຮັບ-ລາຍຈ່າຍ ຈາກງົບປະມານປົກກະຕິ ແລະ ຄ່າບໍລິການປະຈຳ ງວດ ແລ້ວສົ່ງໃຫ້ ພະແນກສາທາລະນະສຸກແຂວງ ເພື່ອສັງລວມ ແລ້ວສົ່ງໃຫ້ ກົມການເງິນ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ ແລະ ຄະນະກຳມະການຈັດຊື້-ຈັດຈ້າງ ຂັ້ນກະຊວງ;

2) ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ 17 ແຂວງ ແລະ ນະຄອນຫຼວງ ມີໜ້າທີ່ສະຫຼຸບລາຍງານ ແລ້ວສົ່ງໃຫ້ ຫ້ອງການສາທາລະນະສຸກເມືອງ ທີ່ຕົນຂຶ້ນກັບ ແລະ ຫ້ອງການສາທາລະນະສຸກເມືອງ ສັງລວມແລ້ວສົ່ງໃຫ້ ພະ ແນກສາທາລະນະສຸກແຂວງ ຫຼັງຈາກນັ້ນ ພະແນກສາທາລະນະສຸກແຂວງສັງລວມແລ້ວ ສົ່ງໃຫ້ກົມການເງິນ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ ແລະ ຄະນະກຳມະການຈັດຊື້-ຈັດຈ້າງ ຂັ້ນກະຊວງ.

**IV. ພາກສ່ວນຜູ້ປະກອບການດ້ານຢາ ແລະ ອຸປະກອນການແພດ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຄື:**

ໂຮງງານ/ບໍລິສັດ ທີ່ຊະນະການປະມູນ ແລະ ໄດ້ເຊັນສັນຍາ ກັບຄູ່ສັນຍາແລ້ວ ຕ້ອງປະຕິບັດ ຕາມສັນຍາ ຢ່າງເຂັ້ມງວດ. ການສະໜອງຢາ, ອຸປະກອນການແພດ, ເຄມີ ແລະ ອົກຊີ ໃຫ້ຄູ່ສັນຍາ ຕ້ອງທ່ວງທັນ ກັບ ຄວາມຕ້ອງການຂອງໂຮງໝໍ; ສະຫລູບ ລາຍງານຈຳນວນລາຍການ, ມູນຄ່າ ແລະ ໜີ້ສິນທີ່ທາງໂຮງໝໍ ໃນແຕ່ ລະຂັ້ນຄ້າງຊຳລະໃຫ້ ກົມການເງິນ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ, ຫ້ອງການ ປະກັນສຸຂະພາບແຫ່ງຊາດ ແລະ ຄະນະກຳມະການ ຈັດຊື້-ຈັດຈ້າງ ຂັ້ນກະຊວງ ເປັນປະຈຳທຸກເດືອນ ຢ່າງປົກ ກະຕິ.

**V. ວິທີການຈັດຕັ້ງປະຕິບັດ**

1) ທຸກພາກສ່ວນທີ່ກ່ຽວຂ້ອງປະຕິບັດຕາມພາລະບົດບາດໜ້າທີ່ຂອງໃຜລາວໂດຍໃຫ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການສະຫລູບສັງລວມໃນແຕ່ລະຂັ້ນ ແລ້ວສ້າງເປັນກຸ່ມວອດແອບ ເພື່ອອຳນວຍຄວາມສະດວກ ແລກປ່ຽນຂໍ້ມູນ;

2) ການສົ່ງ ແລະ ການແລກປ່ຽນຂໍ້ມູນ ຂອງພາກສ່ວນຕ່າງໆ ໃນຄຳສັ່ງສະບັບນີ້ ຕ້ອງຮັກສາຄວາມລັບ, ສົ່ງໃຫ້ແຕ່ພາກສ່ວນ ແລະ ຄູ່ສັນຍາທີ່ກ່ຽວຂ້ອງເທົ່ານັ້ນ;

3) ຂັ້ນສູນກາງຕ້ອງກຳນົດແບບຟອມການລາຍງານໃຫ້ເປັນມາດຕະຖານ ແລະ ເປັນເອກະພາບກັນເພື່ອ ຫລີກລ້ຽງການເອົາຂໍ້ມູນຊ້ຳຊ້ອນ ແລະ ສ້າງຄວາມສັບສົນໃຫ້ທ້ອງຖິ່ນ;

4) ການກຳນົດເອົາຂໍ້ມູນການລາຍງານປະຈຳເດືອນແມ່ນ ເອົາແຕ່ວັນ 1 ຫາ ວັນທີ່ 30 ຂອງເດືອນ;

5) ການສົ່ງຂໍ້ມູນສະຫຼູບລາຍງານປະຈຳເດືອນ ຈາກເມືອງຫາແຂວງແມ່ນບໍ່ໃຫ້ກາຍວັນທີ 5 ຂອງເດືອນ ຖັດໄປ; ແລະ ຈາກແຂວງ/ໂຮງໝໍສູນກາງ/ບໍລິສັດ ຫາສູນກາງບໍ່ໃຫ້ກາຍວັນທີ 15 ຂອງເດືອນ;

6) ທຸກພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງສະຫຼຸບ ຕີລາຄາ ແລະ ຖອດຖອນ ບົດ ຮຽນໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃນແຕ່ລະໄລຍະ ຊອກໃຫ້ຈຸດດີ ເພື່ອເສີມຂະຫຍາຍ ແລະ ຈຸດອ່ອນ ຂໍ້ຄົງຄ້າງ ເພື່ອພ້ອມກັນແກ້ໄຂ;

7) ຫ້ອງການກະຊວງ, ກົມ, ສູນ, ຄະນະກຳມະການປະມູນຈັດຊື້-ຈັດຈ້າງຂັ້ນກະຊວງ ພະແນກສາທາລະ ນະສຸກແຂວງ, ນະຄອນຫຼວງ,ໂຮງໝໍໃນແຕ່ລະຂັ້ນ, ສູນປິ່ນປົວ ແລະ ໂຮງງານຜະລິດຢາ/ບໍລິສັດ ຂາເຂົ້າ-ຂາ ອອກ ດ້ານຢາ-ຜະລິດຕະພັນການແພດ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງ ປະຕິບັດ ຄຳສັ່ງສະບັບນີ້ຢ່າງເຂັ້ມງວດ;

8) ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ຫ້ອງການກະຊວງ | 01 ສະບັບ; |
| 2. | ກົມກ່ຽວຂ້ອງ ບ່ອນລະ | 01 ສະບັບ; |
| 3. | ພະແນກສາທາລະນະສຸກແຂວງ ແຂວງລະ | 01 ສະບັບ; |
| 4. | ບັນດາໂຮງໝໍ ສູນກາງ, ແຂວງ, ເມືອງ ບ່ອນລະ | 01 ສະບັບ; |
| 5. | ບໍລິສັດວິສາຫະກິດ, ເອກະຊົນ ບ່ອນລະ | 01 ສະບັບ; |
| 6. | ເກັບຮັກສາໄວ້ | 01 ສະບັບ. |

**ຮສ ດຣ. ບຸນກອງ ສີຫາວົງ**